ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 3456 /ອຄ
ນະຄອນຫຼວງວຽງຈັນ, ວັນທີ...31...ທັນວາ.....2025

# ຂໍ້ຕົກລົງ
# ວ່າດ້ວຍການສ້າງຕັ້ງອົງການລິຂະສິດລວມໝູ່

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ສະບັບເລກທີ 50/ສພຊ, ລົງວັນທີ 20 ພະຈິກ 2023;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 550/ນຍ, ລົງວັນທີ 01 ກັນຍາ 2025;
- ອີງຕາມ ໜັງສືສະເໜີຂອງກົມຊັບສິນທາງປັນຍາ ສະບັບເລກທີ 1234/ກຊປ, ລົງວັນທີ 17 ທັນວາ 2025.

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ຂັ້ນຕອນ ກ່ຽວກັບວຽກງານຄຸ້ມຄອງການສ້າງຕັ້ງອົງການລິຂະສິດລວມໝູ່ ເພື່ອຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ປົກປ້ອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຂອງເຈົ້າຂອງຜົນງານ ໃຫ້ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ຫັນເປັນອຸດສາຫະກຳ ແລະ ທັນສະໄໝ ຕາມທິດສີຂຽວ ແລະ ຍືນຍົງ.

### ມາດຕາ 2 ອົງການລິຂະສິດລວມໝູ່

ອົງການລິຂະສິດລວມໝູ່ ແມ່ນການຈັດຕັ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຂຽນເປັນພາສາອັງກິດວ່າ “Collective Management Organization: CMO” ທີ່ສ້າງຕັ້ງຂຶ້ນຕາມການຕົກລົງເຫັນດີພາຍໃນກຸ່ມຂອງບັນດາເຈົ້າຂອງຜົນງານ, ເຈົ້າຂອງລິຂະສິດ, ເຈົ້າຂອງສິດກ່ຽວຂ້ອງກັບລິຂະສິດ, ເພື່ອປົກປ້ອງ, ຄຸ້ມຄອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດຂອງຕົນ ແລະ ດຳເນີນກິດຈະກຳຕ່າງໆ ເປັນຕົ້ນ ເຈລະຈາການອະນຸຍາດນຳໃຊ້ຜົນງານ, ເກັບ, ແບ່ງປັນ ແລະ ແຈກຢາຍ ຄ່າລິຂະສິດ, ປົກປ້ອງສິດ ແລະ ຜົນປະໂຫຍດທາງດ້ານກົດໝາຍຂອງສະມາຊິກ ລວມທັງເປັນຕົວແທນໃນການໄກ່ເກ່ຍຂໍ້ຂັດແຍ່ງ ແລະ ການດຳເນີນຄະດີໃນນາມຂອງບຸກຄົນເຫຼົ່ານັ້ນ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບ ທີ່ນໍາໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເຈົ້າຂອງລິຂະສິດ** ໝາຍເຖິງ ເຈົ້າຂອງສິດ ຜູ້ປະດິດຄິດແຕ່ງ ຫຼື ບຸກຄົນ ທີ່ໄດ້ຮັບການໂອນສິດ ຫຼື ສືບທອດຜົນປະໂຫຍດຈາກຜູ້ປະດິດຄິດແຕ່ງ ຫຼື ສືບທອດມູນມໍລະດົກ ຫຼື ບຸກຄົນອື່ນທີ່ໄດ້ຮັບສິດຕາມກົດໝາຍ;

2. **ເຈົ້າຂອງສິດກ່ຽວຂ້ອງກັບລິຂະສິດ** ໝາຍເຖິງ ເຈົ້າຂອງສິດ ຜູ້ສະແດງ, ຜູ້ຜະລິດການບັນທຶກສຽງ ຫຼື ຜູ້ກະຈາຍສຽງ-ແຜ່ພາບ ຫຼື ບຸກຄົນທີ່ໄດ້ຮັບການໂອນສິດ ຫຼື ສືບທອດຜົນປະໂຫຍດ ຫຼື ສືບທອດມູນມໍລະດົກ ຫຼື ບຸກຄົນອື່ນທີ່ໄດ້ຮັບສິດຕາມກົດໝາຍ;

3. **ຄ່າລິຂະສິດ ຫຼື ຄ່າຕອບແທນ** ໝາຍເຖິງ ເງິນທີ່ໄດ້ຮັບຈາກການຊໍາລະຄ່ານໍາໃຊ້ຜົນງານ ເພື່ອແບ່ງປັນໃຫ້ແກ່ເຈົ້າຂອງສິດ;

4. **ໃບອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່** ໝາຍເຖິງ ການອະນຸຍາດໃຫ້ສ້າງຕັ້ງອົງການລິຂະສິດລວມໝູ່ ທີ່ອອກໃຫ້ໂດຍກົມຊັບສິນທາງປັນຍາ, ກະຊວງອຸດສາຫະກໍາ ແລະ ການຄ້າ.

**ມາດຕາ 4 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ກຸ່ມຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານອົງການລິຂະສິດລວມໝູ່ ຢູ່ ສປປ ລາວ.

## ໝວດທີ II
## ການສ້າງຕັ້ງອົງການລິຂະສິດລວມໝູ່

**ມາດຕາ 5 ເງື່ອນໄຂການສ້າງຕັ້ງອົງການລິຂະສິດລວມໝູ່**

ການສ້າງຕັ້ງອົງການລິຂະສິດລວມໝູ່ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ກຸ່ມຄົນ ຫຼື ນິຕິບຸກຄົນ ທີ່ເປັນເຈົ້າຂອງສິດ ຕ້ອງເປັນພົນລະເມືອງລາວ ມີທີ່ຢູ່ອາໄສຢູ່ ສປປ ລາວ;
2. ເປັນການຈັດຕັ້ງທີ່ບໍ່ຫວັງຜົນກໍາໄລ;
3. ມີສະມາຊິກຈໍານວນຫຼາຍ ທີ່ເປັນເຈົ້າຂອງສິດທັງໝົດ ຢູ່ ສປປ ລາວ;
4. ມີໂຄງຮ່າງການຈັດຕັ້ງທີ່ປະກອບດ້ວຍ ຄະນະບໍລິຫານງານ, ຄະນະກວດກາ, ຜູ້ອໍານວຍການ, ສະມາຊິກ, ນັກກົດໝາຍ ແລະ ພະນັກງານຕໍາແໜ່ງອື່ນ ທີ່ກໍານົດໃນກົດລະບຽບຂອງອົງການລິຂະສິດລວມໝູ່, ຊຶ່ງຄະນະບໍລິຫານຂອງອົງການລິຂະສິດລວມໝູ່ ຕ້ອງມີຕົວແທນຈາກແຕ່ລະປະເພດສິດ ທີ່ເປັນສະມາຊິກຂອງອົງການລິຂະສິດລວມໝູ່ ເພື່ອໃຫ້ມີຄວາມຍຸຕິທໍາທາງດ້ານຜົນປະໂຫຍດຂອງສະມາຊິກ.
5. ຜູ້ອໍານວຍການ ລວມທັງພະນັກງານຂອງອົງການລິຂະສິດລວມໝູ່ ທີ່ຮັບຜິດຊອບ ກ່ຽວກັບເອກະສານ, ການອະນຸຍາດນໍາໃຊ້, ການແຈກຢາຍຄ່າຕອບແທນ ແລະ ການເງິນ ຈະຕ້ອງ:
    1) ຜ່ານການຝຶກອົບຮົມກ່ຽວກັບລິຂະສິດ ຫຼື ຫົວຂໍ້ທີ່ກ່ຽວຂ້ອງ ຫຼື ມີຄວາມຮູ້ພື້ນຖານດ້ານລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຈາກກົມຊັບສິນທາງປັນຍາ ຫຼື ສະຖາບັນອື່ນໆ ຫຼື ໄດ້ເຂົ້າຮ່ວມສໍາມະນາ ຢູ່ທັງພາຍໃນ ແລະ ຕ່າງປະເທດ;
    2) ມີຄວາມຮູ້ຄວາມສາມາດ ແລະ ປະສົບການທາງດ້ານການບໍລິຫານ;
    3) ບໍ່ມີຜົນປະໂຫຍດ ຫຼື ສ່ວນໄດ້ສ່ວນເສຍ ກັບຜູ້ນໍາໃຊ້ຜົນງານ ແລະ ສະມາຊິກຂອງອົງການລິຂະສິດລວມໝູ່.
6. ຄະນະກວດກາ ມີໜ້າທີ່ຕິດຕາມ ກວດກາ ຢ່າງໃກ້ຊິດ ກ່ຽວກັບການບໍລິຫານຂອງອົງການລິຂະສິດລວມໝູ່;
7. ມີລະບົບບັນຊີ ໄດ້ຮັບການຢັ້ງຢືນຈາກໜ່ວຍງານກວດສອບບັນຊີພາຍນອກ;

8. ໃນລະບຽບການ ຕ້ອງມີກົນໄກເພື່ອແກ້ໄຂຂໍ້ຂັດແຍ່ງພາຍໃນ ລະຫວ່າງ ບັນດາສະມາຊິກຂອງອົງການລິຂະສິດລວມໝູ່ ກ່ຽວກັບການອະນຸຍາດໃຫ້ຄຸ້ມຄອງສິດ, ການຍົກເລີກ ຫຼື ຖອດຖອນ ການເປັນສະມາຊິກ, ການແບ່ງປັນຄ່າຕອບແທນ ໃຫ້ສະມາຊິກ, ຄ່າບໍລິຫານ ແລະ ອື່ນໆ.

**ມາດຕາ 6 ປະເພດອົງການລິຂະສິດລວມໝູ່**

ອົງການລິຂະສິດລວມໝູ່ ອະນຸຍາດໃຫ້ສ້າງຕັ້ງແຕ່ອົງການດຽວ ຕໍ່ໜຶ່ງປະເພດຂອງອົງການລິຂະສິດລວມໝູ່, ຊຶ່ງແບ່ງອອກເປັນ ເຈັດ ປະເພດ ດັ່ງນີ້:

1. ເພັງ, ຂັບ-ລຳ (ເນື້ອຮ້ອງ-ທຳນອງ) ແລະ ດົນຕີ;
2. ການບັນທຶກສຽງ;
3. ວັນນະກຳ (ບົດກະວີ-ກາບກອນ, ບົດເລື່ອງສັ້ນ ແລະ ນາວະນິຍາຍ);
4. ຜູ້ສະແດງ ແລະ ຜູ້ອອກແບບການສະແດງ ລວມທັງຜູ້ປະດິດຄິດແຕ່ງທ່າຟ້ອນທ່າສະແດງ;
5. ຮູບເງົາ, ສາລະຄະດີ ແລະ ການບັນທຶກພາບ-ສຽງອື່ນໆ;
6. ການກະຈາຍສຽງ-ແຜ່ພາບ;
7. ວິຈິດສິນ ແລະ ຮູບຖ່າຍ.

**ມາດຕາ 7 ຂັ້ນຕອນການຂໍອະນຸຍາດສ້າງຕັ້ງ ອົງການລິຂະສິດລວມໝູ່**

ການຂໍອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່ ມີ ສີ່ ຂັ້ນຕອນ ດັ່ງນີ້:

1. ການສ້າງຕັ້ງເປັນ ກຸ່ມຄົນ ຫຼື ນິຕິບຸກຄົນ ທີ່ເປັນເຈົ້າຂອງສິດ;
2. ການສະເໜີຈັດກອງປະຊຸມໃຫຍ່ສ້າງຕັ້ງອົງການລິຂະສິດລວມໝູ່;
3. ການສະເໜີຮັບຮອງເອົາກົດລະບຽບ ແລະ ຄະນະບໍລິຫານ ຂອງອົງການລິຂະສິດລວມໝູ່;
4. ການຍື່ນຄຳຮ້ອງຂໍອະນຸຍາດສ້າງຕັ້ງເປັນອົງການຈັດຕັ້ງລິຂະສິດລວມໝູ່.

**ມາດຕາ 8 ສ້າງຕັ້ງເປັນກຸ່ມຄົນ ຫຼື ນິຕິບຸກຄົນ ທີ່ເປັນເຈົ້າຂອງສິດ**

ເຈົ້າຂອງສິດ ທີ່ເປັນພົນລະເມືອງລາວ ແລະ ມີທີ່ຢູ່ອາໄສຢູ່ ສປປ ລາວ ສາມາດລວມຕົວກັນເປັນກຸ່ມຄົນ ຫຼື ນິຕິບຸກຄົນ ເພື່ອເປັນຕົວແທນໃນການດຳເນີນການຕ່າງໆ ກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດທາງດ້ານລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ອັນຊອບທຳຂອງຕົນ.

**ມາດຕາ 9 ການສະເໜີຈັດກອງປະຊຸມໃຫຍ່ສ້າງຕັ້ງອົງການລິຂະສິດລວມໝູ່**

ກຸ່ມຄົນ ຫຼື ນິຕິບຸກຄົນ ໃດໜຶ່ງ ທີ່ຕ້ອງການສ້າງຕັ້ງອົງການລິຂະສິດລວມໝູ່ ໃຫ້ສະເໜີຕໍ່ກົມຊັບສິນທາງປັນຍາ ຊຶ່ງປະກອບເອກະສານ ດັ່ງນີ້:

1. ໜັງສືສະເໜີຂໍອະນຸມັດເປີດກອງປະຊຸມໃຫຍ່ສ້າງຕັ້ງອົງການລິຂະສິດລວມໝູ່;
2. ຮ່າງກົດລະບຽບຂອງອົງການລິຂະສິດລວມໝູ່;
3. ຮ່າງໂຄງຮ່າງການຈັດຕັ້ງ;
4. ຮ່າງແຜນການເຄື່ອນໄຫວ ຫຼື ແຜນດຳເນີນງານຂອງອົງການລິຂະສິດລວມໝູ່;
5. ບັນຊີລາຍຊື່ສະມາຊິກ;
6. ປະຫວັດຂອງຄະນະບໍລິຫານຂອງກຸ່ມຄົນ ຫຼື ນິຕິບຸກຄົນ ແລະ ພະນັກງານ;
7. ໃບຢັ້ງຢືນທີ່ຕັ້ງຂອງສຳນັກງານ.

ພາຍຫຼັງເອກະສານຄົບຖ້ວນ ແລະ ຖືກຕ້ອງ ກົມຊັບສິນທາງປັນຍາ ຕ້ອງພິຈາລະນາ ແລະ ອອກແຈ້ງການໃຫ້ຈັດກອງປະຊຸມ ພາຍໃນ ຫ້າ ວັນລັດຖະການ ນັບແຕ່ວັນທີໄດ້ຮັບເອກະສານເປັນຕົ້ນໄປ.

ກໍລະນີ ເອກະສານບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ຜູ້ຍື່ນໜັງສືສະເໜີຊາບ ພາຍໃນ ສາມວັນ ລັດຖະການ ນັບແຕ່ວັນທີໄດ້ຮັບເອກະສານເປັນຕົ້ນໄປ.

ການດໍາເນີນກອງປະຊຸມສ້າງຕັ້ງອົງການລິຂະສິດລວມໝູ່ ຊຶ່ງກຸ່ມຄົນ ຫຼື ກຸ່ມນິຕິບຸກຄົນ ຕ້ອງກະກຽມ ແລະ ຈັດກອງປະຊຸມສ້າງຕັ້ງອົງການລິຂະສິດລວມໝູ່ຂຶ້ນ ພາຍໃນ ເກົ້າສິບວັນ ນັບແຕ່ວັນທີອອກແຈ້ງການເປັນຕົ້ນໄປ.

ກອງປະຊຸມສ້າງຕັ້ງອົງການລິຂະສິດລວມໝູ່ ເປີດຂຶ້ນເພື່ອເຕົ້າໂຮມເອົາບັນດາສະມາຊິກທັງໝົດ ເຂົ້າຮ່ວມກອງປະຊຸມໃຫຍ່ ຊຶ່ງເນື້ອໃນການດໍາເນີນກອງປະຊຸມ ມີດັ່ງນີ້:

1. ຜ່ານແຈ້ງການ ໃຫ້ຈັດກອງປະຊຸມສ້າງຕັ້ງອົງການລິຂະສິດລວມໝູ່;
2. ຜ່ານຮ່າງກົດລະບຽບ;
3. ມີການລົງຄະແນນສຽງ ເລືອກຕັ້ງຄະນະບໍລິຫານ, ຄະນະກວດກາ ແລະ ຕໍາແໜ່ງ ອື່ນໆທີ່ຈໍາເປັນ;
4. ຜ່ານແຜນການເຄື່ອນໄຫວ ຫຼື ແຜນດໍາເນີນງານ.

### ມາດຕາ 10 ການຮັບຮອງເອົາກົດລະບຽບ ແລະ ຄະນະບໍລິຫານຂອງອົງການລິຂະສິດລວມໝູ່

ພາຍຫຼັງຈັດກອງປະຊຸມສ້າງຕັ້ງອົງການລິຂະສິດລວມໝູ່ ພາຍໃນ ສາມສິບວັນ ນັບແຕ່ວັນທີຈັດກອງປະຊຸມ, ຄະນະຮັບຜິດຊອບຕ້ອງປະກອບເອກະສານ ແລ້ວສະເໜີຕໍ່ກົມຊັບສິນທາງປັນຍາ ເພື່ອຮັບຮອງເອກະສານ ດັ່ງນີ້:

1. ໜັງສືສະເໜີຮັບຮອງເອົາກົດລະບຽບ, ຄະນະບໍລິຫານ ແລະ ຄະນະກວດກາ;
2. ຄັດຕິດບົດລາຍງານກອງປະຊຸມ, ຜົນການເລືອກຕັ້ງຄະນະບໍລິຫານ ແລະ ຄະນະກວດກາ, ຮ່າງກົດລະບຽບ, ແຜນດໍາເນີນງານ, ມະຕິກອງປະຊຸມ, ໃບລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມ;

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ກົມຊັບສິນທາງປັນຍາ ຕ້ອງພິຈາລະນາ ແລະ ອອກໃບຮັບຮອງກົດລະບຽບ, ຄະນະບໍລິຫານງານ ແລະ ຄະນະກວດກາອົງການລິຂະສິດລວມໝູ່ ພາຍໃນ ສິບຫ້າວັນນັບແຕ່ວັນທີຮັບເອກະສານເປັນຕົ້ນໄປ.

### ມາດຕາ 11 ການຍື່ນຄໍາຮ້ອງຂໍອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່

ການຂໍອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່ ໃຫ້ຍື່ນຄໍາຮ້ອງນໍາກົມຊັບສິນທາງປັນຍາ, ຊຶ່ງຕ້ອງປະກອບເອກະສານ ດັ່ງນີ້:

1. ຄໍາຮ້ອງ ຕາມແບບພິມຂອງກົມຊັບສິນທາງປັນຍາ;
2. ເອກະສານທີ່ກໍານົດປະເພດສິດ ຫຼື ປະເພດຂອງເຈົ້າຂອງສິດ ທີ່ອົງການລິຂະສິດລວມໝູ່ຈະເປັນຕົວແທນຄຸ້ມຄອງ;
3. ເອກະສານ ກ່ຽວກັບການກໍານົດອັດຕາການເກັບຄ່າລິຂະສິດ ແລະ ແຈກຢາຍຄ່າລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຂອງແຕ່ລະປະເພດສິດ ທີ່ອົງການເປັນຕົວແທນຄຸ້ມຄອງ;
4. ສັນຍາ ກ່ຽວກັບການຮ່ວມມືລະຫວ່າງ ອົງການຈັດຕັ້ງລິຂະສິດລວມໝູ່ ແລະ ອົງການລິຂະສິດລວມໝູ່ຕ່າງປະເທດ ຖ້າມີ;
5. ບົດລາຍງານບັນຊີ ປະຈໍາປີ ທີ່ຜ່ານການກວດສອບຈາກອົງການກວດສອບບັນຊີພາຍນອກ ກໍລະນີ ທີ່ມີການດໍາເນີນການມາກ່ອນແລ້ວ;
6. ໃບຊໍາລະຄ່າທໍານຽມ ແລະ ຄ່າບໍລິການ.

### ມາດຕາ 12 ການພິຈາລະນາຮ້ອງຄໍາຂໍອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່

ພາຍຫຼັງຮັບເອກະສານຂໍອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່ ຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ກໍານົດໄວ້ໃນມາດຕາ 11 ຂອງຂໍ້ຕົກລົງສະບັບນີ້, ກົມຊັບສິນທາງປັນຍາ ຕ້ອງພິຈາລະນາອອກໃບອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່ ພາຍໃນ ສິບຫ້າວັນ ນັບແຕ່ວັນທີໄດ້ຮັບເອກະສານເປັນຕົ້ນໄປ.

ກໍລະນີເອກະສານ ບໍ່ຄົບຖ້ວນ ແລະ ບໍ່ຖືກຕ້ອງ, ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ຜູ້ຍື່ນຄໍາຮ້ອງຊາບ ເພື່ອສະໜອງເອກະສານໃຫ້ຄົບຖ້ວນ ແລະ ຖືກຕ້ອງ ພາຍໃນ ສິບວັນ ລັດຖະການ ນັບແຕ່ວັນທີໄດ້ຮັບ ເອກະສານເປັນຕົ້ນໄປ, ຖ້າຫາກບໍ່ສະໜອງເອກະສານຕາມເວລາທີ່ກໍານົດ ກົມຊັບສິນທາງປັນຍາ ຈະຖືວ່າຄໍາຮ້ອງ ຖືກຍົກເລີກ.

**ມາດຕາ 13 ອາຍຸໃບອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່**

ໃບອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່ ຈະມີອາຍຸນໍາໃຊ້ ຫ້າປີ ນັບແຕ່ວັນທີ່ອອກໃບອະນຸຍາດ ເປັນຕົ້ນໄປ ແລະ ສາມາດຕໍ່ໄດ້.

ການຕໍ່ອາຍຸໃບອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່ ໃຫ້ປະຕິບັດຕາມຂັ້ນຕອນ ທີ່ກໍານົດໄວ້ໃນ ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້.

ການສະເໜີຂໍຕໍ່ອາຍຸໃບອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່ ຕ້ອງໄດ້ປະເມີນຄືນ ຂອງກົມຊັບສິນ ທາງປັນຍາ ໃນການຈັດຕັ້ງປະຕິບັດວຽກງານອົງການລິຂະສິດລວມໝູ່ ໃນໄລຍະ ຫ້າປີ ທີ່ຜ່ານມາພ້ອມທັງ ສອດຄ່ອງຕາມທີ່ກໍານົດໄວ້ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້, ຖ້າຫາກເຫັນວ່າການຈັດຕັ້ງປະຕິບັດວຽກງານ ອົງການລິຂະສິດລວມໝູ່ ໄລຍະຜ່ານມາ ບໍ່ມີປະສິດທິພາບ ແລະ ໄດ້ເຄີຍຖືກໂຈະໃບອະນຸຍາດສ້າງຕັ້ງອົງການລິ ຂະສິດລວມໝູ່ ຕາມທີ່ກໍານົດໄວ້ໃນມາດຕາ 16 ຂອງຂໍ້ຕົກລົງສະບັບນີ້, ກົມຊັບສິນທາງປັນຍາ ຈະບໍ່ພິຈາລະນາຕໍ່ ອາຍຸໃບອະນຸຍາດດັ່ງກ່າວ.

**ມາດຕາ 14 ການບັນທຶກຂໍ້ມູນອົງການລິຂະສິດລວມໝູ່**

ພາຍຫຼັງອອກໃບອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່, ກົມຊັບສິນທາງປັນຍາ ຕ້ອງບັນທຶກຂໍ້ມູນທີ່ ກ່ຽວຂ້ອງລົງໃນຖານຂໍ້ມູນຂອງກົມ ແລະ ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ.

**ມາດຕາ 15 ການປ່ຽນແປງຂໍ້ມູນໃບອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່**

ພາຍຫຼັງອອກໃບອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່ ຫາກມີຈຸດປະສົງ ປ່ຽນແປງ ຫຼື ດັດແກ້ ເອກະສານ ຕາມທີ່ກໍານົດໄວ້ໃນມາດຕາ 9 ແລະ 11 ຂອງຂໍ້ຕົກລົງສະບັບນີ້, ໃຫ້ສະເໜີຕໍ່ກົມຊັບສິນທາງປັນຍາ ພ້ອມທັງສະໜອງຂໍ້ມູນລະອຽດຊັດເຈນ ເພື່ອບັນທຶກລົງໃນຖານຂໍ້ມູນ ຂອງກົມຊັບສິນທາງປັນຍາ.

**ມາດຕາ 16 ການໂຈະໃບອະນຸຍາດ**

ໃບອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່ ຈະຖືກໂຈະ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ອົງການລິຂະສິດລວມໝູ່ ເມີນເສີຍໃຫ້ຄະນະບໍລິຫານ ຫຼື ພະນັກງານຂອງຕົນລະເມີດ ກົດໝາຍ ວ່າດ້ວຍ ຊັບສິນທາງປັນຍາ ແລະ ລະບຽບການ;

2. ປອມແປງເອກະສານ ຫຼື ນໍາໃຊ້ເອກະສານປອມ ທີ່ກ່ຽວຂ້ອງກັບອົງການລິຂະສິດລວມໝູ່;

3. ບໍ່ສາມາດຮັກສາໄດ້ເງື່ອນໄຂການສ້າງຕັ້ງອົງການລິຂະສິດລວມໝູ່ ຕາມທີ່ກໍານົດໄວ້ໃນມາດຕາ 5 ຂອງ ຂໍ້ຕົກລົງສະບັບນີ້;

4. ອົງການລິຂະສິດລວມໝູ່ ລະເມີດສັນຍາ ກັບສະມາຊິກ;

5. ສະຫຼຸບບັນຊີ ບໍ່ຖືກຕ້ອງໃຫ້ແກ່ສະມາຊິກ ຫຼື ກົມຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຕ້ອງອອກແຈ້ງການໂຈະໃບອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່ ພ້ອມທັງ ອອກແຈ້ງການໃຫ້ອົງການລິຂະສິດລວມໝູ່ຮັບຊາບ ເພື່ອປັບປຸງແກ້ໄຂຂໍ້ຜິດພາດ ພາຍໃນ ສາມສິບວັນ ນັບແຕ່ວັນ ທີອອກແຈ້ງການເປັນຕົ້ນໄປ. ສໍາລັບໄລຍະເວລາການໂຈະໃບອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່ ບໍ່ໃຫ້ເກີນ ຫົກເດືອນ.

**ມາດຕາ 17 ການຍື່ນຄຳຊີ້ແຈງຕໍ່ການໂຈະໃບອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່**

ອົງການລິຂະສິດລວມໝູ່ ສາມາດຍື່ນຄຳຊີ້ແຈງ ຫຼື ຄຳອະທິບາຍ ຕໍ່ກົມຊັບສິນທາງປັນຍາ ພາຍໃນ ສາມສິບ ນັບແຕ່ວັນທີອອກແຈ້ງໂຈະໃບອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່ ເປັນຕົ້ນໄປ.

ຖ້າຫາກກົມຊັບສິນທາງປັນຍາ ພິຈາລະນາເຫັນວ່າຄຳຊີ້ແຈງ ຫຼື ຄຳອະທິບາຍມີເຫດຜົນ ຕ້ອງຍົກເລີກການໂຈະ ພ້ອມທັງອອກແຈ້ງການໃຫ້ອົງການລິຂະສິດລວມໝູ່ຮັບຊາບ ພາຍໃນ ຫ້າວັນ ລັດຖະການ ນັບແຕ່ວັນທີອອກແຈ້ງການເປັນຕົ້ນໄປ.

**ມາດຕາ 18 ການຍົກເລີກໃບອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່**

ໃບອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່ ຈະຖືກຍົກເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ສິ້ນສຸດໄລຍະເວລາການໂຈະໃບອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່;
2. ຫາກເຫັນວ່າການກະທຳໃດໜຶ່ງ ໄດ້ສົ່ງຜົນກະທົບຮ້າຍແຮງຕໍ່ສັງຄົມ ແລະ ສະມາຊິກ.

ກົມຊັບສິນທາງປັນຍາ ຕ້ອງອອກແຈ້ງການຍົກເລີກໃບອະນຸຍາດ ພ້ອມທັງແຈ້ງໃຫ້ອົງການລິຂະສິດລວມໝູ່ຮັບຊາບ.

ອົງການລິຂະສິດລວມໝູ່ ສາມາດຍື່ນຄຳຊີ້ແຈງ ຕໍ່ກົມຊັບສິນທາງປັນຍາ ເພື່ອພິຈາລະນາຄືນ ພາຍໃນ ຫົກເດືອນ ນັບແຕ່ວັນທີອອກແຈ້ງການຍົກເລີກເປັນຕົ້ນໄປ.

ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຜົນຂອງການຍົກເລີກໃບອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່ ລົງໃນເວັບໄຊຂອງກົມຊັບສິນທາງປັນຍາ.

## ໝວດທີ III
## ສິດ ແລະ ພັນທະ ຂອງອົງການລິຂະສິດລວມໝູ່

**ມາດຕາ 19 ສິດ ຂອງອົງການລິຂະສິດລວມໝູ່**

ອົງການລິຂະສິດລວມໝູ່ ມີສິດ ດັ່ງນີ້:

1. ສົ່ງເສີມ ແລະ ປົກປ້ອງຜົນປະໂຫຍດຂອງສະມາຊິກຕົນ ກ່ຽວກັບການອອກອະນຸຍາດໃຫ້ໃຊ້ຜົນງານ ໂດຍສອດຄ່ອງຕາມຂອບເຂດຂອງການອະນຸຍາດ ຊຶ່ງກຳນົດໂດຍເຈົ້າຂອງສິດ, ການເກັບ ແລະ ແຈກຢາຍຄ່າຕອບແທນ ຕາມທີ່ກຳນົດໄວ້ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ;
2. ຕິດຕາມ, ກວດກາ ການນຳໃຊ້, ການປົກປ້ອງສິດ ແລະ ຜົນປະໂຫຍດທາງດ້ານກົດໝາຍໃຫ້ສະມາຊິກ, ເກັບລາຍໄດ້ຈາກການອະນຸຍາດໃຫ້ນຳໃຊ້ຜົນງານ ແລະ ໃຊ້ວິທີການທີ່ເໝາະສົມຕໍ່ການອະນຸຍາດນຳໃຊ້ທີ່ຄ້າງຊຳລະ;
3. ເກັບກຳຂໍ້ມູນ ກ່ຽວກັບຜົນງານການສະແດງ, ການບັນທຶກສຽງ ແລະ ການກະຈາຍສຽງ-ແຜ່ພາບ ຂອງຜູ້ໄດ້ຮັບອະນຸຍາດນຳໃຊ້ຜົນງານ;
4. ແຈກຢາຍລາຍຮັບໃຫ້ສະມາຊິກຂອງຕົນ ທີ່ໄດ້ມາຈາກການອອກໃບອະນຸຍາດນຳໃຊ້ຜົນງານ ພາຍຫຼັງຫັກຄ່າໃຊ້ຈ່າຍຕ່າງໆ ໂດຍບໍ່ເລືອກປະຕິບັດ;
5. ຮັກສາຂໍ້ມູນການລົງທະບຽນຂອງສະມາຊິກຕົນ ກ່ຽວກັບຜົນງານ, ການສະແດງ, ການບັນທຶກສຽງ, ການກະຈາຍສຽງ-ແຜ່ພາບ ແລະ ອື່ນໆ;
6. ເປັນຕົວແທນຮ່ວມມືກັບອົງການລິຂະສິດລວມໝູ່ສາກົນ;
7. ອຳນວຍຄວາມສະດວກໃຫ້ສະມາຊິກ ຫຼື ເຈົ້າຂອງສິດ ແລະ ອົງການລິຂະສິດລວມໝູ່ສາກົນ ໃນການເຂົ້າເຖິງຂໍ້ມູນ ເປັນຕົ້ນ ທີ່ຢູ່, ອີເມວ ແລະ ອະທິບາຍລະອຽດຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງ;
8. ນຳໃຊ້ສິດ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 20 ພັນທະ ຂອງອົງການລິຂະສິດລວມໝູ່**

ອົງການລິຂະສິດລວມໝູ່ ມີພັນທະ ດັ່ງນີ້:

1. ປະຕິບັດໜ້າທີ່ຢ່າງຊື່ສັດ, ໂປ່ງໃສ, ຍຸຕິທຳ ແລະ ບໍ່ເລືອກປະຕິບັດ ຕໍ່ສະມາຊິກຂອງຕົນ;

2. ລາຍງານການເຄື່ອນໄຫວ ປະຈຳປີ ແລະ ລາຍງານການເງິນ ປະຈຳປີ ທີ່ໄດ້ຮັບຮອງຈາກບໍລິສັດກວດສອບບັນຊີ ຕໍ່ກົມຊັບສິນທາງປັນຍາ ບໍ່ໃຫ້ເກີນວັນທີ ຊາວ ຂອງເດືອນ ທັນວາ ໃນແຕ່ລະປີ;

3. ເປີດເຜີຍ ແລະ ລາຍງານຂໍ້ມູນ ກ່ຽວກັບບົດລາຍງານການເຄື່ອນໄຫວ ປະຈຳປີ ແລະ ບົດລາຍງານການເງິນ ປະຈຳປີ ລົງໃນຊ່ອງທາງເອເລັກໂຕຣນິກ ເພື່ອໃຫ້ສະມາຊິກຮັບຊາບ;

4. ຈັດກອງປະຊຸມ ປະຈຳປີຂອງສະມາຊິກ ເພື່ອສະຫຼຸບການຈັດຕັ້ງປະຕິບັດວຽກງານໃນ ໜຶ່ງປີ ຜ່ານມາ ແລະ ແຜນດຳເນີນງານໃນປີຕໍ່ໄປ;

5. ຈັດກອງປະຊຸມໃຫຍ່ ທຸກໆ ຫ້າປີ ເພື່ອດຳເນີນການເລືອກຕັ້ງຄະນະບໍລິຫານງານຊຸດໃໝ່;

6. ແຈ້ງເຊີນກົມຊັບສິນທາງປັນຍາ ເຂົ້າຮ່ວມກອງປະຊຸມ ປະຈຳປີ ແລະ ກອງປະຊຸມໃຫຍ່ ເພື່ອຕິດຕາມ;

7. ສ້າງກິດຈະກຳ ສົ່ງເສີມການປະດິດຄິດແຕ່ງ ແລະ ກິດຈະກຳອື່ນໆ ທາງສັງຄົມ;

8. ຮ່ວມມືກັບອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ໃນການສົ່ງເສີມ ແລະ ພັດທະນາລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;

9. ປະຕິບັດພັນທະ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ IV
## ຂໍ້ຫ້າມ

**ມາດຕາ 21 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສ້າງຕັ້ງອົງການລິຂະສິດລວມໝູ່ ໂດຍບໍ່ໄດ້ຮັບອະນຸຍາດ;

2. ສ້າງອຸປະສັກ, ສົ່ງກີດຂວາງ ຫຼື ຂັດຂວາງ ການເຄື່ອນໄຫວວຽກງານຂອງພະນັກງານ ໃນການຈັດຕັ້ງປະຕິບັດວຽກງານຂອງອົງການລິຂະສິດລວມໝູ່;

3. ໃຫ້ສິນບົນແກ່ເຈົ້າໜ້າທີ່ ແລະ ພະນັກງານທີ່ຮັບຜິດຊອບ ວຽກງານອົງການລິຂະສິດລວມໝູ່;

4. ໃຫ້, ເປັນສື່ກາງໃນການໃຫ້ ຫຼື ຮັບ ສິນບົນ;

5. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ ກ່ຽວກັບວຽກງານອົງການລິຂະສິດລວມໝູ່;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 22 ຂໍ້ຫ້າມ ສຳລັບອົງການລິຂະສິດລວມໝູ່**

ຫ້າມອົງການລິຂະສິດລວມໝູ່ ມີພຶດຕິກຳ ດັ່ງນີ້:

1. ເຄື່ອນໄຫວອົງການລິຂະສິດລວມໝູ່ ບໍ່ສອດຄ່ອງກັບກົດໝາຍ, ລະບຽບການ ຫຼື ບໍ່ໄດ້ຮັບອະນຸຍາດຈາກກົມຊັບສິນທາງປັນຍາ;

2. ອະນຸຍາດ ໃຫ້ຜູ້ອື່ນນຳໃຊ້, ເຊົ່າ ຫຼື ໂອນ ໃບອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່;

3. ນຳໃຊ້ໃບອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່ ທີ່ໝົດອາຍຸ;

4. ສະໜອງຂໍ້ມູນ, ຫຼັກຖານ, ຄຳຊີ້ແຈງ, ຄຳໂຕ້ແຍ້ງ ທີ່ບໍ່ຖືກຕ້ອງສອດຄ່ອງກັບຄວາມເປັນຈິງໃຫ້ກົມຊັບສິນທາງປັນຍາ;

5. ເປັນຜູ້ຕາງໜ້າໃຫ້ແກ່ຄູ່ກໍລະນີ ທີ່ມີຂໍ້ຂັດແຍ່ງກັບສະມາຊິກຂອງຕົນ;

6. ໂຄສະນາໃສ່ຮ້າຍປ້າຍສີ ຫຼື ສ້າງຄວາມເສຍຫາຍ ຫຼື ໃຊ້ອຳນາດທີ່ບໍ່ເປັນທຳຕໍ່ຜູ້ອື່ນ;

7. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງສະມາຊິກ, ຜູ້ນຳໃຊ້ ໂດຍບໍ່ໄດ້ຮັບອະນຸຍາດ;

8. ວ່າຈ້າງພະນັກງານຄຸ້ມຄອງທີ່ເຮັດວຽກໃນຂົງເຂດຊັບສິນທາງປັນຍາ ຢູ່ ສປປ ລາວ ເປັນພະນັກງານຂອງອົງການລິຂະສິດລວມໝູ່;

9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 23 ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່**

ຫ້າມພະນັກງານ ແລະ ເຈົ້າໜ້າທີ່ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ອຳນາດ, ໜ້າທີ່, ຕຳແໜ່ງ, ສົມຮູ້ຮ່ວມຄິດ ຫຼື ມີວິທີການອື່ນທຸກຮູບແບບ ເພື່ອຫາຜົນປະໂຫຍດສ່ວນຕົວ;

2. ທວງເອົາ, ຂໍເອົາ, ຮັບສິນບົນ, ລຳອຽງ, ກົດໜ່ວງຖ່ວງດຶງ ແລະ ປອມແປງເອກະສານ;

3. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ ຫຼື ຕໍ່ພຶດຕິກຳ ທີ່ລະເມີດກົດໝາຍ ແລະ ລະບຽບການ;

4. ນຳໃຊ້ເອກະສານປອມແປງ, ເປີດເຜີຍຄວາມລັບທາງລັດຖະການ ຫຼື ທຳລາຍເອກະສານ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ V
## ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານອົງການລິຂະສິດລວມໝູ່

**ມາດຕາ 24 ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານອົງການລິຂະສິດລວມໝູ່**

ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານຄຸ້ມຄອງອົງການລິຂະສິດລວມໝູ່ ແມ່ນກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງກົມຊັບສິນທາງປັນຍາ**

ກົມຊັບສິນທາງປັນຍາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບວຽກງານອົງການລິຂະສິດລວມໝູ່ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

2. ເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄຸ້ມຄອງອົງການລິຂະສິດລວມໝູ່;

3. ພິຈາລະນາອອກ, ຕໍ່ອາຍຸ, ໂຈະ ແລະ ຍົກເລີກ ໃບອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່;

4. ພິຈາລະນາອອກແຈ້ງການໃຫ້ຈັດກອງປະຊຸມ ແລະ ອອກໃບຮັບຮອງກົດລະບຽບ, ຄະນະບໍລິຫານງານ ແລະ ຄະນະກວດກາອົງການລິຂະສິດລວມໝູ່;

5. ຮັບຮອງອັດຕາການຈັດເກັບຄ່າລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;

6. ຕິດຕາມ ແລະ ກວດກາ ການເຄື່ອນໄຫວວຽກງານອົງການລິຂະສິດລວມໝູ່ ໃຫ້ຖືກຕ້ອງສອດຄ່ອງຕາມກົດໝາຍ ແລະ ລະບຽບການ;

7. ການປະເມີນຄືນການຈັດຕັ້ງປະຕິບັດວຽກງານອົງການລິຂະສິດລວມໝູ່;

8. ກ່າວເຕືອນ, ສຶກສາອົບຮົມ ຕໍ່ອົງການລິຂະສິດລວມໝູ່ ທີ່ລະເມີດຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

9. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານອົງການລິຂະສິດລວມໝູ່ ໃຫ້ຂັ້ນເທິງຮັບຊາບ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 26 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 27 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ສີ່ສິບຫ້າວັນ ແລະ ໄດ້ລົງໃນຈົດໝາຍເຫດລັດຖະການເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງອຸດສາຫະກຳ ແລະ ການຄ້າ

ລັດຖະມົນຕີ

ມະໄລທອງ ກົມມະສິດ